ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ-ວປກ ແຂ່ງຂັນກິລາມິດຕະພາບ



ເພື່ອເປັນການສ້າງຂະບວນການຂໍ່ານັບຮັບຕ້ອນວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 70 ປີ (20 ມັງກອນ 1949 - 20 ມັງກອນ 2019) ຄະນະນັກກິລາທະນາຄານແຫ່ງ ສປປ ລາວ ຊຶ່ງນໍາໂດຍທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ນໍາຄະນະກິລາເຂົ້າຮ່ວມແຂ່ງຂັນກິລາບານເຕະ ແລະ ກິລາເປຕັງ ກັບຄະນະກິລາວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ທີ່ນໍາໂດຍທ່ານພົນຈັດຕະວາ ຄໍາຫຼ້າ ພັນໄຊຍະສຸກ ຫົວໜ້າການເມືອງວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ຊຶ່ງຈັດຂຶ້ນທີ່ເດີ່ນກິລາຂອງ ວປກ ໃນວັນທີ 4 ມັງກອນ 2019.

ການແຂ່ງຂັນກິລາບານເຕະຊຶ່ງໄດ້ແກ່ຄະນະກິລາບານເຕະຟຸດຊໍຂອງຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ແລະ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ໂດຍການເຂ່ຍບານຂອງຄະນະກິລາແມ່ຍິງທະນາຄານແຫ່ງ ສປປ ລາວ ແລະ ການແຂ່ງຂັນໄດ້ດໍາເນີນມາໃນເວລາ 5 ນາທີ ທີມທະນາຄານແຫ່ງ ສປປ ລາວ ກໍ່ສາມາດຍິງປະຕູຂອງວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ໄປກ່ອນ; ຈາກນັ້ນທະນາຄານແຫ່ງ ສປປ ລາວ ກໍ່ນໍາໜ່ວຍບານປະຊິດປະຕູຂອງວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານເລື້ອຍມາ ເຮັດໃຫ້ຝ່າຍວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ ປ່ຽນຕົວນັກກິລາຂອງຕົນ ຊຶ່ງສົ່ງຜົນໃຫ້ໜ່ວຍບານລຽບປະຕູຂອງທະນາຄານແຫ່ງ ສປປ ລາວ ຫຼາຍຄັ້ງ; ຜ່ານການແຂ່ງຂັນກິລາບານເຕະມິດຕະພາບຄັ້ງນີ້, ທີມບານເຕະຟຸດຊໍຂອງຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ຊະນະວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ 4 ປະຕູ ຕໍ່ 1.







ສຳລັບການແຂ່ງຂັນເປຕັງສຳລັບ: ສາຍຄະນະນຳຂັ້ນສູງແມ່ນທະນາຄານແຫ່ງ ສປປ ລາວ ຊະນະ ວິທະຍາຄານປ້ອງກັນຊາດ ໄກສອນ ພົມວິຫານ 9 ຕໍ່ 4 ແລະ 9 ຕໍ່ 7.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**